# ການປ່ຽນແປງບົດລາຍງານຂອງ CalWORKs ແລະ CALFRESH

| | |
|---|---|
| ຊື່ກໍລະນີ: | |
| ໝາຍເລກກໍລະນີ: | |
| ໝາຍເລກຂອງເຈົ້າໜ້າທີ່: | |

**ເນື່ອງຈາກວ່າທ່ານໄດ້ຮັບ CalWORKs, ທ່ານຕ້ອງລາຍງານພາຍໃນ 10 ວັນໃນເວລາທີ່ຍອດລາຍໄດ້ທັງໝົດຂອງທ່ານຮອດລະດັບທີ່ກຳນົດໄວ້.** ທ່ານຕ້ອງລາຍງານທຸກຄັ້ງທີ່ລາຍໄດ້ປະຈຳເດືອນທັງໝົດຂອງຄົວເຮືອນຂອງທ່ານຫຼາຍກວ່າລາຍໄດ້ປັດຈຸບັນທີ່ກຳນົດຢູ່ໃນບົດລາຍງານໃນຂັ້ນຕົ້ນ (Income Reporting Threshold-IRT) ຂອງທ່ານ.

| | | |
|---|---|---|
| ຂະໜາດຂອງຄອບຄົວທ່ານແມ່ນ | | ________ |
| ລາຍໄດ້ປັດຈຸບັນຂອງທ່ານແມ່ນ | ໂດລາ | ________ |
| **IRT ຂອງທ່ານແມ່ນ** | ໂດລາ | ________ |

## ຈະລາຍງານແນວໃດ?

ຖ້າຫາກວ່າລາຍໄດ້ຂອງທ່ານທັງໝົດສູງເກີນຈຳນວນ IRT ທີ່ລະບຸໄດ້ຂ້າງເທິງ, ທ່ານຕ້ອງລາຍງານສິ່ງນີ້ໃຫ້ແກ່ທາງຄາວຕີ້**ພາຍໃນ 10 ວັນ**. ທ່ານສາມາດລາຍງານຂໍ້ມູນນີ້ໃຫ້ແກ່ຄາວຕີ້ດ້ວຍການໂທລະສັບຫາຄາວຕີ້ຫຼືລາຍງານມັນດ້ວຍການຂຽນ.

## ໂດຍ "ລາຍໄດ້ປະຈຳເດືອນທັງໝົດ" ພວກເຮົາໝາຍເຖິງ:

- ⇨ ເງິນທີ່ທ່ານໄດ້ທຸກຢ່າງ (ທັງເງິນທີ່ຫາມາໄດ້ເອງແລະ**ເງິນທີ່ຫາມາໄດ້ມາຈາກການຊ່ວຍເຫຼືອ**).
- ⇨ ຈຳນວນກ່ອນຫັກອອກ. (ຕົວຢ່າງຂອງການຫັກອອກແມ່ນ: ພາສີ, ປະກັນສັງຄົມຫຼືການສະໜັບສະໜູນຕໍ່ການອອກບຳນານອື່ນໆ, ການອາຍັດຊັບສິນ, ແລະອື່ນໆ)

## ຈະມີຫຍັງເກີດຂຶ້ນ?

- ⇨ ເງິນຂອງທ່ານອາດຈະຫລຸດລົງຫຼືຢຸດຍ້ອນລາຍໄດ້ຂອງທ່ານເກີນ IRT ຂອງທ່ານ.
- ⇨ IRT ຂອງທ່ານອາດປ່ຽນແປງໃນເວລາທີ່ລາຍໄດ້ຂອງທ່ານປ່ຽນຫຼືໃນເວລາໃຜຜູ້ນຶ່ງຍ້າຍອອກຈາກບ້ານຂອງທ່ານ.
- ⇨ ທາງຄາວຕີ້ຈະໃຫ້ທ່ານຮັບຮູ້ດ້ວຍການຂຽນຫາທ່ານທຸກຄັ້ງທີ່ IRT ຂອງທ່ານມີການປ່ຽນແປງ.
- ⇨ ທ່ານຍັງຈຳເປັນຕ້ອງລາຍງານລາຍໄດ້ທັງໝົດປະຈຳປີຂອງທ່ານຄືນໃນຊ່ວງການກຳນົດ/ການຢັ້ງຢືນ (RD/RC) ຕາມແບບຟອມ RD/RC, ເຖິງແມ່ນວ່າ ທ່ານໄດ້ລາຍງານເງິນຈຳນວນນັ້ນໄປແລ້ວກໍ່ຕາມ.

## ການລົງໂທດສຳລັບການບໍ່ລາຍງານ

ຖ້າຫາກທ່ານບໍ່ໄດ້ລາຍງານໃນເວລາທີ່ລາຍໄດ້ຂອງທ່ານຫຼາຍກວ່າຂອບເຂດລາຍໄດ້ IRT ຂອງຄົວເຮືອນຂອງທ່ານເຊິ່ງທ່ານອາດຈະໄດ້ເງິນຫຼາຍກວ່າທີ່ທ່ານຄວນຈະໄດ້. ທ່ານ**ຕ້ອງ**ຈ່າຍຄືນເງິນທີ່ທ່ານໄດ້ເກີນໂດຍຄິດໄລ່ອີງຕາມລາຍໄດ້ຂອງທ່ານທີ່ທ່ານບໍ່ໄດ້ລາຍງານ. ຖ້າຫາກວ່າທ່ານບໍ່ໄດ້ລາຍງານເຈດຕະນາທີ່ພະຍາຍາມຮັບເອົາເງິນທີ່ເກີນ, ມັນແມ່ນການສໍ້ໂກງ, ແລະທ່ານອາດຈະຖືກຮຽກເກັບເງິນຄືນດ້ວຍຄວາມຜິດທາງອາຍາ.

**ຖ້າຫາກທ່ານໄດ້ CalWORKs, <u>ທ່ານກໍ່ຕ້ອງ</u>ລາຍງານສິ່ງຕ່າງໆລຸ່ມນີ້ <u>ພາຍໃນ 10 ວັນ</u>ໃນເວລາທີ່ມັນມີເກີດຂຶ້ນ:**

1. ທຸກເທື່ອທີ່ມີບຸກຄົນໃດນຶ່ງຍ້າຍເຂົ້າ ຫຼື ຍ້າຍອອກຈາກບ້ານຂອງທ່ານ.
2. ທຸກເທື່ອທີ່ມີບຸກຄົນໃດນຶ່ງເຂົ້າມາຢູ່, ຫຼືຄົນໃນຄົວເຮືອນຂອງທ່ານ, ເຊິ່ງເປັນຜູ້ທີ່ຖືກພິຈາລະນາວ່າມີຄວາມຜິດທາງດ້ານຢາເສບຕິດທີ່ຜິດກົດໝາຍ *ເຊິ່ງບໍ່ໄດ້ລາຍງານໄວ້ກ່ອນ.*
3. ທຸກເທື່ອທີ່ມີບຸກຄົນໃດນຶ່ງເຂົ້າມາຮ່ວມ, ຫຼືຢູ່ໃນຄົວເຮືອນຂອງທ່ານ, ເຊິ່ງເປັນຜູ້ລະເມີດເງື່ອນໄຂຂອງການຖ້າລົງໂທດຫຼືການລົງໂທດ.
4. ທຸກເທື່ອທີ່ມີບຸກຄົນໃດນຶ່ງເຂົ້າມາຮ່ວມ, ຫຼືຢູ່ໃນຄົວເຮືອນຂອງທ່ານ, ເຊິ່ງເປັນຜູ້ທີ່ລະເມີດກົດໝາຍ.
5. ທຸກເທື່ອທີ່ທ່ານປ່ຽນທີ່ຢູ່.

**ຖ້າຫາກທ່ານໄດ້ CalFresh, <u>ທ່ານກໍ່ຕ້ອງ</u>ລາຍງານສິ່ງຕ່າງໆລຸ່ມນີ້ <u>ພາຍໃນ 10 ວັນ</u>ໃນເວລາທີ່ມັນມີເກີດຂຶ້ນ:**

1. ທຸກລາຍງານທີ່ຈຳເປັນສຳລັບ CalWORKs, ນອກເໜືອຈາກ IRT (ເບິ່ງຂໍ້ 1-5 ຂ້າງເທິງ).
2. ທ່ານໄດ້ປ່ຽນແປງແຫຼ່ງທີ່ມາຂອງລາຍໄດ້ມີທັງການເລີ້ມຕົ້ນ, ການຢຸດຫຼືການປ່ຽນແປງວຽກງານ.
3. ລາຍໄດ້ຈາກການຫາມາໄດ້ເອງປ່ຽນແປງຫຼາຍກວ່າ 100 ໂດລາ.
4. ລາຍໄດ້ທີ່ມາຈາກການຊ່ວຍເຫຼືອປ່ຽນແປງຫຼາຍກວ່າ 50 ໂດລາ (ນອກຈາກ CalWORKs ຫຼືການຊ່ວຍເຫຼືອທົ່ວໄປ "General Assistance").
5. ການປ່ຽນແປງຂອງຄ່າເຊົ່າຫຼືຄ່າໃຊ້ຈ່າຍສິ່ງອຳນວຍຄວາມສະດວກ (ຖ້າທ່ານຍ້າຍເທົ່ານັ້ນ).
6. ທຸກການປ່ຽນແປງຈຳນວນຂອງການລ້ຽງດູເດັກນ້ອຍຕາມຄຳສັ່ງຂອງສານ.
7. ຖ້າຫາກທ່ານເປັນຜູ້ໃຫຍ່ທີ່ມີຮ່າງກາຍສົມບູນ ແລະ ບໍ່ມີພັນທະ (Able Bodied Adult Without Dependents "ABAWD"), ທ່ານຕ້ອງລາຍງານທຸກຄັ້ງທີ່ວຽກງານຂອງທ່ານຫຼືຊົ່ວໂມງການຝຶກອົບຮົມຫລຸດລົງໜ້ອຍກວ່າ 20 ຊົ່ວໂມງຕໍ່ອາທິດຫຼື 80 ຊົ່ວໂມງຕໍ່ເດືອນ.

## ລາຍງານຂໍ້ມູນແບບສະໝັກໃຈ

ທ່ານອາດຈະສະໝັກໃຈລາຍງານການປ່ຽນແປງໃຫ້ທາງຄາວຕີ້ໄດ້ທຸກເວລາ. *ການລາຍງານການປ່ຽນແປງບາງຢ່າງອາດຈະເຮັດໃຫ້ທ່ານໄດ້ຜົນປະໂຫຍດຫຼາຍຂຶ້ນ.* ເຊັ່ນຕົວຢ່າງ:

- ບາງຄົນໃນເຮືອນຖືພາ.
- ບາງຄົນທີ່ໄດ້ຮັບການຊ່ວຍເຫຼືອເງິນສົດ (cash aid) ມີຄວາມຕ້ອງການພິເສດ, ເຊັ່ນວ່າ: ການຖືພາ, ອາຫານພິເສດທີ່ທ່ານໝໍສັ່ງ, ຄວາມຈຳເປັນສຸກເສີນຂອງຄົວເຮືອນ, ແລະອື່ນໆ.
- ສຳລັບ CalFresh, ຖ້າມີບາງຄົນພິການຫຼືອາຍຸ 60 ຫຼືຫຼາຍກວ່າໄດ້ຮັບຄ່າໃຊ້ຈ່າຍທາງການແພດໃໝ່ອີກຫຼືສູງກວ່າຈາກກອງທຶນດູແລສຸຂະພາບ.